MALAYSAN. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 358 – 366

# ຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນວິຊາ ວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີ 3 ທີ່ວິທະຍາໄລຄູຄັງໄຂ ສົກຮຽນ 2022-2023

**ປານີ ມາໄລສານ***

*ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ສປປ ລາວ*

**ຕິດຕໍ່ພົວພັນ: ປານີ ມາໄລສານ, ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ເບີໂທ: +856 20 2234 4556; ອີເມວ: Panymls7576@gmail.com*

*ຂໍ້ມູນບົດຄວາມ:*
*ການສົ່ງບົດ: 08 ພະຈິກ 2023*
*ການປັບປຸງ: 17 ມີນາ 2024*
*ການຕອບຮັບ: 27 ມີນາ 2024*

**ບົດຄັດຫຍໍ້**

ການວິໄຈໃນຄັ້ງນີ້ ເປັນການວິໄຈກ່ຽວກັບ “ຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນວິຊາ ວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີ 3 ທີ່ວິທະຍາໄລຄູຄັງໄຂ ສົກຮຽນ 2022-2023”. ມີຈຸດປະສົງເພື່ອສຶກສາລະດັບຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນ ວິຊາ ວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີທີ 3 ທີ່ວິທະຍາໄລຄູຄັງໄຂໂດຍລວມ ແລະ ແຕ່ລະດ້ານຈຳນວນ 4 ດ້ານຄື: ດ້ານເນື້ອໃນຫຼັກສູດ, ດ້ານການຈັດການຮຽນ-ການສອນ, ດ້ານຄູຜູ້ສອນ ແລະ ດ້ານສະພາບແວດລ້ອມ. ການສຶກສາຄັ້ງນີ້ໄດ້ນຳໃຊ້ແບບປະລິມານ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ນັກສຶກສາປີ 3 ສາຍພາສາລາວ ເຊິ່ງມີ ຈຳນວນທັງໝົດ 21 ຄົນ, ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ແບບສອບຖາມ, ສະຖິຕິທີ່ໃຊ້ໄດ້ແກ່ຄ່າສະເລ່ຍ ແລະ ຄ່າພົນປ່ຽນມາດຕະຖານ. ຜົນການວິເຄາະຂໍ້ມູນສະແດງອອກດັ່ງນີ້:

ຄວາມເພິ່ງພໍໃຈຂອງນັກສຶກສາ ສາຍຄູພາສາລາວ ຕໍ່ການຮຽນວິຊາ ວິໄຈ ໂດຍລວມທຸກດ້ານແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3.86, SD=0.46). ເມື່ອແຍກຕາມລາຍດ້ານແລ້ວສະແດງອອກຄື: ດ້ານເນື້ອໃນຫຼັກສູດ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=4.10; SD=0.03). ດ້ານການຈັດການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=4.01; SD=0.67). ດ້ານຄູຜູ້ສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=4.14; SD=0.69). ດ້ານສະ ພາບແວດລ້ອມ ໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3.19; SD=0.43).

**ຄຳສຳຄັນ:** *ຄວາມເພິ່ງພໍໃຈ, ນັກສຶກສາ, ການຮຽນ, ວິໄຈ.*

MALAYSAN. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 358 – 366

# Students' satisfaction in learning the research subjects in the Lao language teacher's System 12 + 4 Year 3 at Khangkhay Teacher Training College, academic year 2022-2023

**Pany MALAYSAN***

*Khangkhay Teacher Training College, Xiengkhouang Province, Lao PDR*

****Correspondence:*** *Pany MALAYSAN, Khangkhay Teacher Training College, Tel: +856 20 2234 4556; E-mail:* Panymls7576@gmail.com

***Article Info:***
*Submitted: Nov 08, 2023*
*Revised: Mar 17, 2024*
*Accepted: Mar 27, 2024*

## Abstract

This research is about research "Students' satisfaction in learning the research course in the Lao language teacher's System 12 + 4 Year 3 at Khangkhay Teacher Training College, academic year 2022-2023". The aim is to study the level of satisfaction of students in learning research subjects in the Lao language teacher's Year 3 at Khangkhay Teacher Training College Overall and in each aspect, there are 4 aspects: Course content, Teaching and learning management, On the teacher's side and Environmental aspects. This study used a quantitative method, The sample group used in the study was 3 year Lao language students which has a total of 21 people, The instrument used in the research is a questionnaire, Statistics used for mean and standard deviation, data analysis is defined using data analysis results as follows:

The satisfaction of the students of the Lao language teacher's course towards the study of research subjects in all aspects is very high which has a ($\bar{X}$=3.86, SD=0.46). When separated according to the surface, it is expressed as: The content of the course as a whole and separated by items is at many levels with the average value ($\bar{X}$=4.10; SD=0.03). The teaching-learning management as a whole and separated by items are at many levels with the average value ($\bar{X}$=4.01; SD= 0.67). The teachers overall and separate according to the items are at many levels with the average value ($\bar{X}$=4.14; SD=0.69). The overall environmental aspect and separate items are at several levels with average values ($\bar{X}$=3.19; SD=0.43).

**Keywords:** *Satisfaction, Students, Study, Research subjects*

## 1. ພາກສະເໜີ

ການສຶກສາເປັນຮາກຖານທີ່ສຳຄັນປະການໜຶ່ງໃນການສ້າງສັນຄວາມຈະເລີນກ້າວໜ້າ ແລະ ແກ້ໄຂບັນຫາຕ່າງໆໃນສັງຄົມໄດ້ ເນື່ອງຈາກການສຶກສາເປັນຂະບວນການທີ່ຈະຊ່ວຍໃຫ້ບຸກຄົນໄດ້ພັດທະນາຕົນເອງຕະຫຼອດຊີວິດ, ສາມາດພັດທະນາສັກກະຍະພາບ ແລະ ຄວາມສາມາດດ້ານຕ່າງໆທີ່ຈະດຳລົງຊີວິດໄດ້ຢ່າງມີຄວາມສຸກ ແລະ ຮູ້ທັນການປ່ຽນແປງໄປຕາມສະພາບທາງສັງຄົມ, ເສດຖະກິດໃນປັດຈຸບັນ. ການທີ່ຈະພັດທະນາໃນດ້ານການຈັດການຮຽນ-ການສອນໃຫ້ບັນລຸຈຸດໝາຍຂອງກະຊວງສຶກສາໄດ້ຢ່າງມີປະສິດທິພາບ; ປັດໄຈຫຼັກທີ່ມີຄວາມສຳຄັນຢ່າງຍິ່ງປະການໜຶ່ງຄື: ຄູ, ອາຈານ ແລະ ບຸກຄະລາກອນທາງການສຶກສາທີ່ຈະຂັບເຄື່ອນພະລັງການປະຕິຮູບການສຶກສາຈະຕ້ອງມີຄວາມຮູ້ຄວາມເຂົ້າໃຈໃນການຈັດການຮຽນ-ການສອນທີ່ເອົາຜູ້ຮຽນເປັນໃຈກາງ ເພື່ອພັດທະນາຜູ້ຮຽນໃຫ້ເປັນຄົນເກັ່ງ, ຄົນດີ, ມີຄວາມສຸກ (Promjouy 2547).

ການສຶກສາເປັນຂະບວນການໃຫ້ ແລະ ການຮັບຮູ້, ປະສົບການ, ການປັບປ່ຽນທັດສະນະຄະຕິ, ການສ້າງຈິດສຳນຶກການເພີ່ມພູນທັກສະ, ການສ້າງຄວາມເຂົ້າໃຈໃຫ້ຈະແຈ້ງ, ການອົບຮົມປູກຝັງຄ່ານິຍົມ, ການຖ່າຍທອດສາສະໜາ, ສິລະປະ ແລະ ວັດທະນະທຳຂອງສັງຄົມ ໂດຍມີຈຸດປະສົງທີ່ຈະໃຫ້ບຸກຄົນມີຄວາມຈະເລີນງອກງາມທາງປັນຍາ, ມີຄວາມຮູ້ຄວາມສາມາດເໝາະສົມກັບການປະກອບອາຊີບສາມາດດຳລົງຊີວິດໄດ້ຢ່າງເໝາະສົມ, ມີຄ່ານິຍົມທີ່ດີ ແລະ ຢູ່ຮ່ວມກັບຜູ້ອື່ນຢ່າງມີຄວາມສຸກ ແລະ ທີ່ສຳຄັນການສຶກສາເປັນເຄື່ອງມືໃນການພັດທະນາປະເທດ ທັງໃນດ້ານສັງຄົມ, ເສດຖະກິດ ແລະ ການເມືອງ. ການສຶກສາຈະຊ່ວຍຍົກລະດັບຄຸນນະພາບປະຊາກອນຂອງຊາດໃຫ້ມີຄຸນນະພາບສອດຄ່ອງຕາມແນວທາງພັດທະນາເສດຖະກິດ ແລະ ສັງຄົມ

ແຫ່ງຊາດຫາກປະເທດຊາດມີການປ່ຽນແປງນະໂຍບາຍ, ສະພາບສັງຄົມ, ເສດຖະກິດ ແລະ ການເມືອງ. ການຈັດການສຶກສາຂອງປະເທດກໍຈະຕ້ອງມີການປ່ຽນແປງໄປນຳແນວທາງການສຶກສາໃນແຕ່ລະປະເທດຈຶ່ງແຕກຕ່າງກັນຕາມຄວາມເຊື່ອ, ແນວຄິດ ແລະ ປັດຊະຍາການຈັດການສຶກສາ (Pawabud, 2015).

ຄວາມເພິ່ງພໍໃຈໃນການຮຽນ ໝາຍເຖິງ ຄວາມຮູ້ສຶກທີ່ດີ ຫຼື ຄວາມຄິດທີ່ດີທີ່ເປັນໄປຕາມຄາດຫວັງໂດຍໄດ້ຮັບການຈູງໃຈທັງໃນລັກສະນະທີ່ເປັນຮູບປະທຳ ແລະ ນາມມະທຳໃນການດຳເນີນການຮຽນ-ການສອນ ເຮັດໃຫ້ນັກຮຽນມີການປ່ຽນແປງພຶດຕິກຳທີ່ມີຄວາມຈະເລີນງອກງາມໃນທຸກດ້ານມີຄວາມກະຕືລືລົ້ນໃນການຮຽນມີຄວາມສົນໃຈຕໍ່ຂະບວນການຮຽນ-ການສອນ (Phonmaphap, 2550).

ວິທະຍາໄລຄູຄັງໄຂ ແມ່ນສະຖາບັນໜຶ່ງທີ່ມີໜ້າທີ່ໃນການກໍ່ສ້າງຄູ ແລະ ມີພາລະບົດບາດເທົ່າທຽມກັບວິທະຍາໄລຄູໃນບັນດາວິທະຍາໄລຄູອື່ນໆໃນທົ່ວປະເທດ ເຊິ່ງມີພາລະໜ້າທີ່ໃນການກໍ່ສ້າງຄູ, ຍົກລະດັບຄູໃຫ້ມີຄວາມຮູ້, ຄວາມສາມາດ ເພື່ອໄປຮັບໃຊ້ຢູ່ໃນທ້ອງຖິ່ນໂດຍສະເພາະແມ່ນ ແຂວງຊຽງຂວາງ ແລະ ແຂວງຫົວພັນ. ເຊິ່ງວິທະຍາໄລຄູຄັງໄຂໄດ້ກຳນົດວິໄສທັດຄື: **"ວິທະຍາໄລຄູຄັງໄຂ ເປັນສະຖາບັນສ້າງຄູທີ່ມີຄຸນນະພາບ ເປັນຄູມືອາຊີບທີ່ດີເລີດປະເສີດດ້ວຍຄຸນນະທຳ ນຳໜ້າດ້ານການວິໄຈ"**. ເນື່ອງຈາກວ່າສະຖາບັນແຫ່ງນີ້ເປັນບ່ອນສຶກສາຄົ້ນຄວ້າຫາຄວາມຮູ້ ແລະ ເປັນບ່ອນກໍ່ສ້າງຄົນໃຫ້ກາຍເປັນຄູ. ນອກຈາກການກໍ່ສ້າງຝຶກຝົນໃຫ້ມີຄວາມຮູ້ຄວາມສາມາດແລ້ວຍັງຈະຕ້ອງໄດ້ຝຶກໃຫ້ມີກິລິຍາມາລະຍາດທີ່ດີ, ມີຄຸນນະທຳທີ່ງົດງາມ ແລະ ລວມທັງອະລິຍະບົດຕ່າງໆໃນການເຄື່ອນໄຫວໄປມາ ແລະ ວັດທະນະທຳຮີດຄອງປະເພນີ ແລະ ການນຸ່ງຖືຕ່າງໆໃຫ້ຖືກຕ້ອງກັບວັດທະນະທຳຂອງຊາດລາວເຮົາ (Yangjiamoua, 2019).

ການສຶກສາເປັນຂະບວນການໃຫ້, ການຮັບຮູ້ ແລະ ປະສົບການ ໂດຍມີຈຸດປະສົງໃຫ້ບຸກຄົນມີຄວາມຈະເລີນທາງປັນຍາ, ສາມາດນຳໄປປະກອບອາຊີບ ແລະ ພັດທະນາປະເທດໄດ້. ການສຶກສາຈຶ່ງຈຳເປັນຕ້ອງມີການຈັດການໃຫ້ເປັນລະບົບມີເປົ້າໝາຍທີ່ຊັດເຈນ ເພື່ອພັດທະນາຄຸນນະພາບຂອງຄົນ; ການຈັດການຮຽນຮູ້ຈຶ່ງປຽບເໝືອນເຄື່ອງມືທີ່ສົ່ງເສີມໃຫ້ຜູ້ຮຽນໄປສູ່ຈຸດໝາຍປາຍທາງຄື: ຄວາມສຳເລັດໃນຊີວິດ ໂດຍມີອົງປະກອບທີ່ສຳຄັນໃນການຈັດການຮຽນ-ການສອນໄດ້ແກ່ ຜູ້ສອນ, ການຈັດກິດຈະກຳການຮຽນ-ການສອນ, ຫຼັກສູດ ແລະ ປະເມີນຜົນ ແລະ ປັດໄຈຢູ່ໜູນການຮຽນ-ການສອນເປັນຕົ້ນ. ວິທະຍາໄລຄູຄັງໄຂ ກໍໄດ້ມີການຈັດການຮຽນ-ການສອນທີ່ມີປະສິດທິພາບຢ່າງຕໍ່ເນື່ອງ ສອດຄ່ອງກັບມາດຖານຕາມກະຊວງສຶກສາກຳນົດໄວ້ (Yangjiamoua, 2019).

ວິໄຈ ແມ່ນວິຊາໜຶ່ງທີ່ໄດ້ຈັດເຂົ້າໃນການຮຽນ-ການສອນ ຢູ່ໃນທຸກສາຍ, ທຸກລະບົບ ເຊິ່ງເປັນວິຊາທີ່ມີຄວາມສຳຄັນຫຼາຍ ທີ່ໄດ້ຮຽນກ່ຽວກັບວິວັດທະນາການ ແລະ ປະເພດຂອງການວິໄຈແບບປະຕິບັດ, ການວິໄຈປະຕິບັດທາງການສຶກສາ, ການວິໄຈປະຕິບັດເພື່ອການສ້າງພະລັງຮ່ວມໃນໂຮງຮຽນ, ການວິໄຈໃນຊັ້ນຮຽນ ແລະ ການພັດທະນາການສອນ, ເທັກນິກການຮວບຮວມຂໍ້ມູນສຳລັບການວິໄຈປະຕິບັດການ, ການວິເຄາະ ແລະ ນຳສະເໜີການວິໄຈ (Champathong, 2009).

ການຄົ້ນຄວ້າຄັ້ງນີ້ຜູ້ວິໄຈຕ້ອງການສຶກສາຄວາມເພິ່ງພໍໃຈຂອງນັກຮຽນເຊິ່ງເປັນປັດໄຈສຳຄັນທີ່ມີຕໍ່ສະຖານສຶກສາ ສາມາດຊ່ວຍໃຫ້ຜູ້ບໍລິຫານ ແລະ ຜູ້ກ່ຽວຂ້ອງສາມາດນຳຂໍ້ມູນພື້ນຖານໄປໃຊ້ໃນການວາງແຜນພັດທະນາພັດທະນາການຈັດການຮຽນ-ການສອນຂອງວິທະຍາໄລຄູຄັງໄຂໃຫ້ເກີດປະສິດທິພາບເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບຂະບວນການຮຽນຮູ້ຂອງຜູ້ຮຽນ ແລະ ຂໍ້ມູນເຫຼົ່ານັ້ນຍັງເຮັດໃຫ້ຮູ້ເຖິງບັນຫາ ແລະ ອຸປະສັກຂອງການຮຽນດ້ານຕ່າງໆ ເຊິ່ງສາມາດນຳໄປສູ່ການປັບປຸງແກ້ໄຂຄຸນນະພາບໃນການຈັດການຮຽນ-ການສອນ ໄດ້ຢ່າງເໝາະສົມຕາມຄວາມຕ້ອງການຂອງຜູ້ຮຽນຜົນການວິໄຈເທື່ອນີ້ຈຶ່ງເປັນປະໂຫຍດໃນການຈັດຂະບວນການຮຽນ-ການສອນ ແລະ ແກ້ໄຂບັນຫາການອອກລະຫວ່າງຮຽນຂອງນັກຮຽນລວມທັງຈຳນວນນັກຮຽນທີ່ສະໝັກເຂົ້າຮຽນຫຼຸດໜ້ອຍລົງໄດ້ຢ່າງມີປະສິດທິພາບຕໍ່ໄປ.

ເຖິງຢ່າງໃດກໍ່ຕາມການຈັດການຮຽນ-ການສອນໃນວິທະຍາໄລຄູຄັງໄຂ ຍັງຕ້ອງພັດທະນາໄປໃຫ້ທັນຕໍ່ສະຖານະການທີ່ປ່ຽນແປງຢູ່ຕະຫຼອດເວລາ ເພື່ອໃຫ້ຄຸນນະພາບທາງດ້ານວິຊາການມີຄວາມເຂັ້ມແຂງປະກອບກັບນັກ ສຶກສາໄດ້ຮັບຄຸນນະພາບຈາກການຈັດການຮຽນ-ການສອນທີ່ມີປະສິດທິພາບດ້ວຍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຜູ້ວິໄຈມີຄວາມສົນໃຈທີ່ຈະສຶກສາກ່ຽວກັບ ຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນວິຊາ ວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີ 3 ທີ່ວິທະຍາໄລຄູຄັງໄຂ ສົກຮຽນ 2022-2023.

ຈຸດປະສົງຂອງການຄົ້ນຄວ້າແມ່ນ ເພື່ອສຶກສາລະດັບຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນ ວິຊາ ວິໄຈໃນສາຍຄູພາສາລາວ ລະບົບ 12+4 ປີທີ 3 ທີ່ວິທະຍາໄລຄູຄັງໄຂໂດຍລວມ ແລະ ແຕ່ລະດ້ານຈຳນວນ 4 ດ້ານຄື: ດ້ານ

ເນື້ອໃນຫຼັກສູດ, ດ້ານການຈັດການຮຽນ-ການສອນ, ດ້ານຄູຜູ້ສອນ, ດ້ານສະພາບແວດລ້ອມ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີການ

ການສຶກສາຄັ້ງນີ້ເປັນການສຶກສາແບບປະລິມານ ເພື່ອວັດຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຮຽນວິຊາວິໄຈ ສາຍຄູພາສາລາວປີທີ 3 ທີ່ວິທະຍາໄລຄູຄັງໄຂ ໂດຍການສຶກສາເອກະສານງານວິໄຈທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈໃນການຮຽນຂອງນັກສຶກສາທີ່ເປັນແນວຄິດ, ທິດສະດີ, ຜົນງານວິໄຈທີ່ກ່ຽວຂ້ອງກັບຕົວແປທີ່ສຶກສາເພື່ອໃຊ້ເປັນແນວທາງໃນການສ້າງແບບສອບຖາມ.

### 2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສາຄັ້ງນີ້ ຜູ້ຄົ້ນຄວ້າໄດ້ສຶກສາຈາກປະຊາກອນໂດຍກົງຄື: ນັກສຶກສາສາຍຄູພາສາລາວ ລະບົບ 12+4 ປີ 3 ຈຳນວນ 21 ຄົນ, ເນື່ອງຈາກວ່າປະຊາກອນມີຈຳນວນໜ້ອຍ ສະນັ້ນ, ຈຶ່ງນຳມາເປັນກຸ່ມຕົວຢ່າງທັງໝົດ.

### 2.3 ເຄື່ອງມືໃນການເກັບກຳຂໍ້ມູນ

#### 2.3.1 ເຄື່ອງມືດຳເນີນການວິໄຈ

ການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ໃຊ້ວິທີການສຶກສາແບບປະລິມານ ໂດຍໃຊ້ແບບສອບຖາມ ເພື່ອໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງຕາມຈຸດປະສົງຂອງການວິໄຈທີ່ກຳນົດໄວ້ ໂດຍຈຳແນກເປັນ 4 ດ້ານ. ລວມທັງໝົດມີຈຳນວນ 33 ຂໍ້ ດັ່ງນີ້:

**ດ້ານທີ 1**: ເປັນແບບສອບຖາມກ່ຽວກັບ ດ້ານເນື້ອໃນຫຼັກສູດ ມີຈຳນວນ 7 ຂໍ້

**ດ້ານທີ 2**: ເປັນແບບສອບຖາມກ່ຽວກັບ ດ້ານຈັດການຮຽນ-ການສອນ ມີຈຳນວນ 9 ຂໍ້

**ດ້ານທີ 3**: ເປັນແບບສອບຖາມກ່ຽວກັບ ດ້ານຄູຜູ້ສອນ ມີຈຳນວນ 10 ຂໍ້

**ດ້ານທີ 4**: ເປັນແບບສອບຖາມກ່ຽວກັບ ດ້ານສະພາບແວດລ້ອມ ມີຈຳນວນ 7 ຂໍ້

ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ໂດຍກຳນົດເກນການໃຫ້ຄະແນນໃນການວິເຄາະຂໍ້ມູນດັ່ງນີ້:

ລະດັບ 5 ໝາຍເຖິງ ລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ
ລະດັບ 4 ໝາຍເຖິງ ລະດັບລະດັບຄວາມເພິ່ງພໍໃຈຫຼາຍ
ລະດັບ 3 ໝາຍເຖິງ ລະດັບລະດັບຄວາມເພິ່ງພໍໃຈປານກາງ
ລະດັບ 2 ໝາຍເຖິງ ລະດັບລະດັບຄວາມເພິ່ງພໍໃຈໜ້ອຍ
ລະດັບ 1 ໝາຍເຖິງ ລະດັບລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ

#### 2.3.2 ວິທີເກັບກຳຂໍ້ມູນ

ພາຍຫຼັງທີ່ສ້າງແບບສອບຖາມຮຽບຮ້ອຍແລ້ວຫຼັງຈາກນັ້ນກໍລົງເກັບກຳຂໍ້ມູນ, ດຳເນີນການຮວບຮວມວິເຄາະຂໍ້ມູນຕາມຂັ້ນຕອນໃນການວິໄຈທີ່ໄດ້ກຳນົດໄວ້ ເຊິ່ງຜູ້ວິໄຈໄດ້ມີວິທີການດຳເນີນການເກັບກຳຮວບຮວມຂໍ້ມູນໂດຍມີຂັ້ນຕອນດຳເນີນງານດັ່ງນີ້:

1. ຜູ້ວິໄຈດຳເນີນການເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມໃຫ້ກັບປະຊາກອນກຸ່ມຕົວຢ່າງທີ່ກຳນົດໄວ້.
2. ຢາຍແບບສອບຖາມໃຫ້ນັກສຶກສາສາຍຄູພາສາລາວ ປີ 3 ສົກຮຽນ 2022-2023 ທີ່ວິທະຍາໄລຄູຄັງໄຂ ເຊິ່ງໄດ້ແບບສອບຖາມຄືນມາທັງໝົດ 21 ສະບັບເທົ່າກັບ 100%.

### 2.4 ສະຖິຕິທີ່ໃຊ້ໃນການວິໄຈ

ການຄົ້ນຄວ້າຄັ້ງນີ້ ແມ່ນໄດ້ວິເຄາະຂໍ້ມູນໂດຍນຳໃຊ້ Microsoft Excel ໃນການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານຂອງຄະແນນເປັນແຕ່ລະດ້ານ ແລະ ເປັນແຕ່ລະຂໍ້ໂດຍໃຊ້ເກນການແປຄວາມໝາຍຂອງຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍ 4.51-5.00 ໝາຍເຖິງ ລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍ 3.51-4.50 ໝາຍເຖິງ ລະດັບຄວາມເພິ່ງພໍໃຈຫຼາຍ

ຄ່າສະເລ່ຍ 2.51-3.50 ໝາຍເຖິງ ລະດັບຄວາມເພິ່ງພໍໃຈປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງ ລະດັບຄວາມເພິ່ງພໍໃຈໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງ ລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

ຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນວິຊາວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີ 3 ທີ່ວິທະຍາໄລຄູຄັງໄຂ ສົກຮຽນ 2022-2023 ໂດຍລວມທຸກດ້ານແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.86 ແລະຄ່າຜັນປ່ຽນມາດຖານເທົ່າກັບ 0.46. ໃນນັ້ນສະແດງໃຫ້ເຫັນວ່າ: ດ້ານຄູຜູ້ສອນ ແມ່ນມີການປະຕິບັດຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 4.14 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.69, ຕໍ່ມາແມ່ນ ດ້ານການຈັດການຮຽນ-ການສອນ ເຊິ່ງມີຄ່າສະເລ່ຍເທົ່າກັບ 4.14 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.67, ດ້ານເນື້ອໃນຫຼັກສູດເຊິ່ງມີຄ່າສະເລ່ຍເທົ່າກັບ 4.10 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.03, ດ້ານສະພາບແວດລ້ອມ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.19 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.43.

**ດ້ານເນື້ອໃນຫຼັກສູດ** ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.10 SD=0.03), ເມື່ອລຽງຕາມ

MALAYSAN. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 358 – 366

ລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍສາມອັນດັບທຳອິດ ໄດ້ແກ່: ການຈັດວິຊາ ໃຫ້ຮຽນຕາມຫຼັກ ສູດກົງກັບຄວາມຕ້ອງການຂອງຜູ້ຮຽນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບກັບ ($\bar{X}$=4.38; SD= 0.02), ເນື້ອໃນຄວາມຮູ້ທີ່ຮຽນເຮັດໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ທາງເທັກໂນໂລຢີ ແລະ ວິທະຍາການທີ່ທັນສະໄໝ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບກັບ ($\bar{X}$=4.19; SD= 0.04), ເນື້ອໃນວິຊາທີ່ຮຽນສາມາດເປັນພື້ນຖານໃນການສຶກສາຕໍ່ໄດ້ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບກັບ ($\bar{X}$=4.10; SD=0.03).

**ດ້ານການຈັດການຮຽນ-ການສອນ** ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະ ເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.01; SD=0.67), ເມື່ອລຽງຕາມລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍສາມອັນດັບທຳອິດໄດ້ແກ່: ກິດຈະກຳການຮຽນ-ການສອນເຝິກໃຫ້ຜູ້ຮຽນເຮັດວຽກທັງແບບຄົນດຽວ ແລະ ແບບເປັນກຸ່ມ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.43; SD=0.50), ໃຊ້ວິທີສອນສອດຄ່ອງສຳພັນກັບຈຸດປະສົງ, ເນື້ອໃນ ແລະ ການວັດຜົນປະເມີນຜົນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.38; SD=0.61), ວິທີສອນເຮັດໃຫ້ຜູ້ຮຽນເຂົ້າໃຈເນື້ອໃນການຮຽນໄດ້ງ່າຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.20; SD=0.61).

**ດ້ານຄູຜູ້ສອນ** ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.14 SD=0.69), ເມື່ອລຽງຕາມລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍສາມອັນດັບທຳອິດໄດ້ແກ່: ຜູ້ສອນມີຄວາມຮອບຮູ້ກ່ຽວກັບເທັກນິກ, ວິທີສອນແບບຕ່າງໆເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.38; SD= 0.60), ຜູ້ສອນມີຄວາມຮອບຮູ້ໃນເນື້ອຫາວິຊາທີ່ສອນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=4.29; SD=0.61), ຜູ້ສອນມີຄວາມເປັນກັນເອງກັບຜູ້ຮຽນ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=4.24; SD=0.78).

**ດ້ານສະພາບແວດລ້ອມ** ໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$= 3.19; SD=0.43), ເມື່ອລຽງຕາມລຳດັບຄະແນນສະເລ່ຍແຕ່ຫຼາຍຫາໜ້ອຍສາມອັນດັບທຳອິດໄດ້ແກ່: ຫ້ອງຮຽນມີວັດສະດຸທີ່ໃຊ້ປະກອບການສອນຢ່າງພຽງພໍ ເຊິ່ງຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$= 3.50; SD=0.50), ຫ້ອງຮຽນມີສຽງລົບກວນຈາກພາຍນອກ ເຊິ່ງຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=3.38; SD=0.48), ຫ້ອງຮຽນມີແສງສະຫວ່າງ ແລະ ການຖ່າຍເທຂອງອາກາດທີ່ດີ ເຊິ່ງຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານເທົ່າກັບ ($\bar{X}$=3.31; SD=0.46).

## 4. ວິພາກຜົນ

❖ **ດ້ານເນື້ອໃນຫຼັກສູດ** ນັກສຶກສາມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນ ໂດຍລວມຢູ່ໃນລະດັບຫຼາຍ ແລະ ເມື່ອພິຈາລະນາເປັນແຕ່ລະຂໍ້ນັກສຶກສາມີຄວາມເພິ່ງພໍໃຈໃນການຈັດການຮຽນ -ການສອນຢູ່ໃນລະດັບຫຼາຍທຸກຂໍ້ຕາມລຳດັບດັ່ງນີ້: ການຈັດວິຊາໃຫ້ຮຽນຕາມຫຼັກສູດກົງກັບຄວາມຕ້ອງການຂອງຜູ້ຮຽນ, ເນື້ອໃນຄວາມຮູ້ທີ່ຮຽນເຮັດໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ທາງເທັກໂນໂລຢີ ແລະ ວິທະຍາການທີ່ທັນສະໄໝ, ເນື້ອໃນວິຊາທີ່ຮຽນສາມາດເປັນພື້ນຖານໃນການສຶກສາຕໍ່ໄດ້, ເນື້ອໃນຄວາມຮູ້ໃນວິຊາທີ່ຮຽນໄດ້ສົ່ງເສີມຂະບວນການຄິດວິເຄາະເພື່ອແກ້ບັນຫາ, ເນື້ອໃນວິຊາທີ່ຮຽນມີການຈັດລຳດັບຄວາມຍາກງ່າຍຂອງເນື້ອໃນ, ເນື້ອໃນຄວາມຮູ້ໃນລາຍວິຊາທີ່ຮຽນມີປະໂຫຍດຕໍ່ການດຳລົງຊີວິດ ດັ່ງນັ້ນ, ສະແດງວ່າຫຼັກສູດຈັດເນື້ອໃນໄດ້ພໍດີກັບຈຳນວນເວລາຮຽນຂອງຜູ້ຮຽນ ຈຶ່ງສົ່ງຜົນໃຫ້ນັກຮຽນເກີດຄວາມເພິ່ງພໍໃຈໃນລະດັບຫຼາຍໃນດ້ານຫຼັກສູດສອດຄ່ອງກັບ Bouasy (2532) ກ່າວວ່າ ຫຼັກສູດໝາຍເຖິງປະສົບການທັງໝົດທີ່ໂຮງຮຽນເປັນຜູ້ນຳທາງໃຫ້ເກີດການຮຽນຮູ້ເຊິ່ງຈັດໃຫ້ຜູ້ຮຽນເກີດການຮຽນຮູ້ບໍ່ວ່າປະສົບການນັ້ນຈະເປັນສ່ວນໜຶ່ງຂອງແຜນທີ່ຂຽນໄວ້ ຫຼື ບໍ່ກໍຕາມ.

❖ **ດ້ານການຈັດການຮຽນ-ການສອນ** ນັກຮຽນມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນໂດຍລວມຢູ່ໃນລະດັບຫຼາຍແມ່ນ ໃຊ້ວິທີສອນສອດຄ່ອງສຳພັນກັບຈຸດປະສົງ, ເນື້ອໃນ ແລະ ການວັດຜົນປະເມີນຜົນ, ກິດຈະກຳການຮຽນ-ການສອນເຝິກໃຫ້ຜູ້ຮຽນເຮັດວຽກທັງແບບຄົນດຽວ ແລະ ແບບເປັນກຸ່ມ, ເປີດໂອກາດໃຫ້ຜູ້ຮຽນໄດ້ຊັກຖາມ ແລະ ສະແດງອອກໃນຊົ່ວໂມງຮຽນ ທັງນີ້ເນື່ອງຈາກການຈັດກິດຈະກຳການຮຽນຜູ້ຮຽນໃຫ້ໄດ້ຝຶກປະຕິບັດ, ຄົ້ນຄວ້າ, ໄດ້ຊັກຖາມ ແລະ ສະແດງອອກ. ທັງນີ້ວິທະຍາໄລຍັງໄດ້ຈັດຕາຕະລາງຮຽນໃນແຕ່ລະລາຍວິຊາໄດ້ຢ່າງເໝາະສົມຈຶ່ງເຮັດໃຫ້ນັກຮຽນຮູ້ທິດທາງໃນການຈັດການຮຽນ-ການສອນ ຈຶ່ງມີເປົ້າໝາຍໃນການຮຽນຮູ້ສອດຄ່ອງກັບ Paserdsy (2543) ໄດ້ໃຫ້ຄວາມໝາຍຂອງການຮຽນ-ການສອນໄວ້ວ່າໝາຍເຖິງກິດຈະກຳທີ່ກ່ຽວຂ້ອງກັບການຮຽນການສອນ, ວິທີການສອນ ການໃຊ້ສື່ປະກອບ

ການຮຽນ-ການສອນ ແລະ ການວັດຜົນປະເມີນຜົນເພື່ອໃຫ້ຜູ້ຮຽນນັ້ນເກີດການຮຽນຮູ້ ແລະ ພັດທະນາໄປສູ່ເປົ້າໝາຍທີ່ຫຼັກສູດຕ້ອງການໂດຍ ຍຶດຜູ້ຮຽນເປັນສູນກາງຕະຫຼອດຈົນຄຳນຶງເຖິງປະສົບການເດີມຂອງຜູ້ຮຽນທັງການສົ່ງເສີມໃຫ້ຜູ້ຮຽນເກີດຄວາມຄິດສ້າງສັນໃໝ່ໆພ້ອມທັງເກີດທັດສະນະຄະຕິທີ່ດີຕໍ່ການຮຽນຮູ້.

❖ **ດ້ານຄູຜູ້ສອນ** ນັກສຶກສາມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນໂດຍລວມຢູ່ໃນລະ ດັບຫຼາຍແມ່ນຜູ້ສອນເວົ້າຈາສຸພາບ, ບຸກຄະລິກະພາບໜ້າເຊື່ອຖື, ຜູ້ສອນອະທິບາຍເນື້ອໃນໄດ້ຊັດເຈນ, ເຂົ້າໃຈງ່າຍ; ຜູ້ສອນແຕ່ງກາຍເໝາະສົມກັບຄວາມເປັນຄູ ສ່ວນຂໍ້ອື່ນໆກໍຢູ່ໃນລະດັບຫຼາຍເຊັ່ນກັນ ເຊິ່ງສອດຄ່ອງກັບ Chanthonuray (2546) ໄດ້ສຶກສາຄວາມເພິ່ງພໍໃຈຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ຕໍ່ວິຊາການງານ ແລະ ອາຊີບໂຮງຮຽນຂະຫຍາຍໂອກາດທາງການສຶກສາສັງກັດເທດສະບານເມືອງເພັດບູຣີ ຜົນການວິໄຈ ພົບວ່າ ດ້ານຄູຜູ້ສອນ ນັກຮຽນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ.

**ດ້ານສະພາບແວດລ້ອມ** ນັກຮຽນມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນໂດຍລວມຢູ່ໃນລະ ດັບຄວາມເພິ່ງພໍໃຈຫຼາຍ ໂດຍສາມອັນດັບທຳອິດໄດ້ແກ່ ຫ້ອງຮຽນມີຂະໜາດກວ້າງ ແລະ ມີບ່ອນນັ່ງຢ່າງພຽງພໍ, ຮອງລົງມາແມ່ນຫໍສະໝຸດມີບໍລິການອຳນວຍຄວາມສະດວກໃນການຄົ້ນຄວ້າ ແລະ ຫ້ອງຮຽນມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ ສອດຄ່ອງກັບ Sakonruk (2540) ໄດ້ວິໄຈເລື່ອງ ຄວາມຄິດເຫັນຂອງນັກສຶກສາລະດັບປະກາສະນີຍະບັດວິຊາຊີບຊັ້ນສູງທີ່ມີຕໍ່ການຈັດການຮຽນ-ການສອນຂອງວິທະຍາໄລພານິດຍະການ, ສັງກັດກົມອະຊີວະສຶກສາ ພົບວ່າ ນັກສຶກສາມີຄວາມຄິດເຫັນໂດຍລວມ ແລະ ທຸກດ້ານຢູ່ໃນລະດັບປານກາງ. ດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມພົບວ່າການຈັດອາຄານສະຖານທີ່ ແລະ ສະພາບແວດລ້ອມມີຄວາມເໝາະສົມກັບສະພາບການຮຽນ-ການສອນ.

## 5. ສະຫຼຸບ

ຈາກການສຶກສາຄົ້ນຄວ້າທີ່ກ່ຽວກັບ ຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນວິຊາ ວິໄຈ ໃນສາຍຄູພາສາລາວ ລະບົບ 12+4 ປີ 3 ທີ່ວິທະຍາໄລຄູຄັງໄຂ ສົກຮຽນ 2022-2023 ສາມາດສະຫຼຸບຜົນການຄົ້ນຄວ້າໄດ້ດັ່ງນີ້:

1. ດ້ານເນື້ອໃນຫຼັກສູດ ນັກສຶກສາມີຄວາມເພິ່ງພໍໃຈໂດຍລວມຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ ແລະ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າ ມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນຢູ່ໃນລະດັບຫຼາຍທຸກຂໍ້.

2. ດ້ານການຈັດການຮຽນ-ການສອນ ນັກສຶກສາມີຄວາມເພິ່ງພໍໃຈໂດຍລວມຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ ແລະ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າ ມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນຢູ່ໃນລະດັບຫຼາຍທີ່ສຸດທຸກຂໍ້.

3. ດ້ານຄູຜູ້ສອນ ນັກສຶກສາມີຄວາມເພິ່ງພໍໃຈໂດຍລວມຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ ແລະ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າ ມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນຢູ່ໃນລະດັບຫຼາຍທຸກຂໍ້.

4. ດ້ານສະພາບແວດລ້ອມ ນັກສຶກສາມີຄວາມເພິ່ງພໍໃຈໂດຍລວມຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ ແລະ ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າ ມີຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນຢູ່ໃນລະດັບຫຼາຍ ແລະ ປານກາງ 2 ຂໍ້.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າ ມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bouasy, T. (2532,). *Curriculum Design Theory and develop.* Print times 2, The capital of Bangkok: Develop education. p.8.

Champathong, P. (2009). *Practical research.* Ministry of Education Department of Teacher Training. p.49.

Chanthonuray, V. (2546). *Third year high school students' satisfaction with academics and careers at schools that expand educational opportunities.* The Capital of Bangkok: Srinakarinvirolod University.

Houngnoy, U. (2546). *Satisfaction in learning the accounting subject group of professional diploma students.* The capital of Bangkok: Srinakarinvirolod University.

Kaxalerd, X. (2543). *Satisfaction in studying secretarial subjects of professional diploma students Ton Buri College of Arts*. The Capital of Bangkok: Srinakarinvirolod University.

Maslow, A.H. (1970). *Motivation and Personality.* 2 en ed. New York: Harper s Row.

Paserdsy, L. (2 5 4 3). *Satisfied farmersIn participating in the restructuring and programSediment farming production system*. Udon Thani Province Mahidon University. p.18.

Phasoukphan, K. (2531). *Students' satisfaction with the environment in the College of Vocational Education under the Department of Vocational Education, Education Area 8*. The capital of Bangkok: Srinakarinvirolod University.

Phonmaphap, R. (2550). *Student satisfaction with teaching-learning managemen in the course of the Department of Educationt. Faculty of Education Naresuan University.*

Promjouy, S. (2547). *Teaching principles*. Faculty of Science Radsapat Academy. Udon Thany. p.2.

Sakonruk, U. (2540). *The opinion of the students of the higher vocational diplomathere is a teaching-teaching arrangement of the College of Vocational Education Department.* The Capital of Bangkok: Srinakarinvirolod University. p. 90-92.

Thevakoun, J. (2555). *Satisfaction in the management of teaching and learning of Bachelor of Arts students in the 1st year, 2nd year, 3rd year sachernsao College of vocational education.* The Capital of Bangkok: Srinakarinvirolod University.

Wolman, T.E. (1973). *Education and Organization Leadership in Elementary School.* Englewood Cliffs: New Jersey: Prentice Hall.

Yangjiamoua, V. (2019). *A guide to writing a graduation report and Study the teaching*. Khangkhay Teacher training college.

Yenchalern, S. (2543). *Satisfaction with learning business professions of 5th and 6th year high school students Pathum Cangkha School, GeneralEducation Department.* The capital of Bangkok: Srinakarinvirolod University.

ຕາຕະລາງທີ 1: ສະແດງຜົນການວິເຄາະ ລະດັບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູພາສາລາວ ຕໍ່ການຮຽນ ວິຊາວິໄຈ ໂດຍລວມທຸກດ້ານ.

| ລ/ດ | ຄວາມເພິ່ງພໍໃຈໃນແຕ່ລະດ້ານ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ດ້ານເນື້ອໃນຫຼັກສູດ | 4.10 | 0.03 | ຫຼາຍ |
| 2 | ດ້ານການຈັດການຮຽນ-ການສອນ | 4.14 | 0.67 | ຫຼາຍ |
| 3 | ດ້ານຄູຜູ້ສອນ | 4.14 | 0.69 | ຫຼາຍ |
| 4 | ດ້ານສະພາບແວດລ້ອມ | 3.19 | 0.43 | ຫຼາຍ |
| | ລວມ | 3.86 | 0.46 | ຫຼາຍ |

ຕາຕະລາງທີ 2: ສະແດງຜົນການວິເຄາະ ດ້ານເນື້ອໃນຫຼັກສູດ ໂດຍລວມ ແລະ ແຍກຕາມລາຍຂໍ້

| ລ/ດ | ດ້ານເນື້ອໃນຫຼັກສູດ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ການຈັດວິຊາໃຫ້ຮຽນຕາມຫຼັກສູດກົງກັບຄວາມຕ້ອງການຂອງຜູ້ຮຽນ | 4.38 | 0.02 | ຫຼາຍ |
| 2 | ເນື້ອໃນຄວາມຮູ້ໃນລາຍວິຊາທີ່ຮຽນມີປະໂຫຍດຕໍ່ການດຳລົງຊີວິດ | 3.95 | 0.04 | ຫຼາຍ |
| 3 | ເນື້ອໃນຄວາມຮູ້ໃນວິຊາທີ່ຮຽນໄດ້ສົ່ງເສີມຂະບວນການຄິດວິເຄາະເພື່ອແກ້ບັນຫາ | 4.05 | 0.03 | ຫຼາຍ |
| 4 | ເນື້ອໃນຄວາມຮູ້ໃນວິຊາທີ່ຮຽນໄດ້ສົ່ງເສີມຄວາມຄິດລິເລີ່ມສ້າງສັນ | 3.95 | 0.05 | ຫຼາຍ |
| 5 | ເນື້ອໃນຄວາມຮູ້ທີ່ຮຽນເຮັດໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ທາງເທັກໂນໂລຍີ ແລະ ວິທະຍາການທີ່ທັນສະໄໝ | 4.19 | 0.04 | ຫຼາຍ |
| 6 | ເນື້ອໃນວິຊາທີ່ຮຽນສາມາດເປັນພື້ນຖານໃນການສຶກສາຕໍ່ໄດ້ | 4.10 | 0.03 | ຫຼາຍ |
| 7 | ເນື້ອໃນວິຊາທີ່ຮຽນມີການຈັດລຳດັບຄວາມຍາກງ່າຍຂອງເນື້ອໃນ | 4.05 | 0.03 | ຫຼາຍ |

| | | | | |
|---|---|---|---|---|
| | ລວມ | 4.10 | 0.03 | ຫຼາຍ |

ຕາຕະລາງທີ 3: ສະແດງຜົນການວິເຄາະ ດ້ານການຈັດການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້

| ລ/ດ | ດ້ານການຈັດການຮຽນ-ການສອນ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ໃຊ້ວິທີສອນສອດຄ່ອງສຳພັນກັບຈຸດປະສົງ, ເນື້ອໃນ ແລະ ການວັດຜົນປະເມີນຜົນ | 4.38 | 0.61 | ຫຼາຍ |
| 2 | ວິທີສອນເຮັດໃຫ້ຜູ້ຮຽນເຂົ້າໃຈເນື້ອໃນການຮຽນໄດ້ງ່າຍ | 4.20 | 0.61 | ຫຼາຍ |
| 3 | ໃຊ້ສື່ປະກອບການຮຽນ-ການສອນທີ່ຫຼາກຫຼາຍຊ່ວຍກະຕຸ້ນຄວາມສົນໃຈຂອງຜູ້ຮຽນໄດ້ | 4.10 | 0.63 | ຫຼາຍ |
| 4 | ກິດຈະກຳການຮຽນ-ການສອນເຝິກໃຫ້ຜູ້ຮຽນເຮັດວຽກທັງແບບຄົນດຽວ ແລະ ແບບເປັນກຸ່ມ | 4.43 | 0.50 | ຫຼາຍ |
| 5 | ກິດຈະກຳການເຝິກປະຕິບັດຜູ້ສອນໃຫ້ຜູ້ຮຽນໄດ້ຄົ້ນຄວ້າ ແລະ ທົດລອງດ້ວຍຕົນເອງ | 4.05 | 0.75 | ຫຼາຍ |
| 6 | ເປີດໂອກາດໃຫ້ຜູ້ຮຽນໄດ້ຊັກຖາມ ແລະ ສະແດງອອກໃນຊົ່ວໂມງຮຽນ | 3.48 | 0.61 | ຫຼາຍ |
| 7 | ມີການມອບໝາຍງານໃຫ້ຜູ້ຮຽນໄດ້ເຮັດແບບເຝິກຫັດ ຫຼື ວຽກເພີ່ມເຕີມ | 3.57 | 0.66 | ຫຼາຍ |
| 8 | ມີການອົບຮົມ ແລະ ຄວບຄຸມລະບຽບວິໄນເພີ່ມເຕີມນອກ ເໜືອຈາກການສອນໃນລາຍວິຊາ | 4.14 | 0.79 | ຫຼາຍ |
| 9 | ວິທະຍາໄລໄດ້ຈັດຕາຕະລາງຮຽນໃນແຕ່ລະລາຍວິຊາທີ່ຮຽນຢ່າງເໝາະສົມ | 3.76 | 0.88 | ຫຼາຍ |
| | ລວມ | 4.01 | 0.67 | ຫຼາຍ |

ຕາຕະລາງທີ 4: ສະແດງຜົນການວິເຄາະ ດ້ານຄູຜູ້ສອນ ໂດຍລວມ ແລະ ແຍກຕາມລາຍຂໍ້

| ລ/ດ | ດ້ານຄູຜູ້ສອນ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ຜູ້ສອນມີຄວາມຮອບຮູ້ໃນເນື້ອຫາວິຊາທີ່ສອນ | 4.29 | 0.61 | ຫຼາຍ |
| 2 | ຜູ້ສອນມີຄວາມຮອບຮູ້ກ່ຽວກັບເທັກນິກ, ວິທີສອນແບບຕ່າງໆ | 4.38 | 0.60 | ຫຼາຍ |
| 3 | ຜູ້ສອນມີຄວາມຂະຫຍັນໝັ່ນພຽນ ໃຝ່ຫາຄວາມຮູ້ທີ່ທັນສະໄໝເພີ່ມເຕີມ | 4.19 | 0.70 | ຫຼາຍ |
| 4 | ຜູ້ສອນມີຄວາມຍຸດຕິທຳໃນການຈັດກິດຈະກຳການສອນ ແລະ ການໃຫ້ຄະແນນ | 4.19 | 0.68 | ຫຼາຍ |
| 5 | ຜູ້ສອນມີຄວາມເປັນກັນເອງກັບຜູ້ຮຽນ | 4.24 | 0.78 | ຫຼາຍ |
| 6 | ຜູ້ສອນເວົ້າຈາສຸພາບ, ບຸກຄະລິກະພາບໜ້າເຊື່ອຖື | 4.24 | 0.75 | ຫຼາຍ |
| 7 | ຜູ້ສອນອະທິບາຍເນື້ອໃນໄດ້ຊັດເຈນ, ເຂົ້າໃຈງ່າຍ | 4.14 | 0.63 | ຫຼາຍ |
| 8 | ຜູ້ສອນແຕ່ງກາຍເໝາະສົມກັບຄວາມເປັນຄູ | 3.90 | 0.78 | ຫຼາຍ |
| 9 | ຜູ້ສອນມີຄວາມຮັບຜິດຊອບ ແລະ ກົງຕໍ່ເວລາໃນການສອນ | 3.90 | 0.66 | ຫຼາຍ |
| 10 | ຜູ້ສອນເອົາໃຈໃສ່ ແລະ ທຸ່ມເທຕໍ່ບັນຫາໃນການຮຽນຂອງນັກຮຽນ | 3.90 | 0.70 | ຫຼາຍ |
| | ລວມ | 4.14 | 0.69 | ຫຼາຍ |

ຕາຕະລາງທີ 5: ສະແດງຜົນການວິເຄາະ ດ້ານສະພາບແວດລ້ອມ ໂດຍລວມ ແລະ ແຍກຕາມລາຍຂໍ້

| ລ/ດ | ດ້ານສະພາບແວດລ້ອມ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ຫ້ອງຮຽນມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ | 3.19 | 0.53 | ຫຼາຍ |
| 2 | ຫ້ອງຮຽນມີແສງສະຫວ່າງ ແລະ ການຖ່າຍເທຂອງອາກາດທີ່ດີ | 3.31 | 0.46 | ຫຼາຍ |
| 3 | ຫ້ອງຮຽນມີສຽງລົບກວນຈາກພາຍນອກ | 3.38 | 0.48 | ຫຼາຍ |

MALAYSAN. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 358 – 366

| | | | | |
|---|---|---|---|---|
| 4 | ຫ້ອງຮຽນມີວັດສະດຸທີ່ໃຊ້ປະກອບການສອນຢ່າງພຽງພໍ | 3.50 | 0.50 | ຫຼາຍ |
| 5 | ຫ້ອງຮຽນມີຂະໜາດກວ້າງ ແລະ ມີບ່ອນນັ່ງຢ່າງພຽງພໍ | 3.13 | 0.33 | ຫຼາຍ |
| 6 | ຫໍສະໝຸດມີບໍລິການອຳນວຍຄວາມສະດວກໃນການຄົ້ນຄວ້າ | 2.94 | 0.24 | ປານກາງ |
| 7 | ຫໍສະໝຸດມີໜັງສືທີ່ທັນສະໄໝເໝາະສົມກັບຄວາມຕ້ອງການ | 2.88 | 0.48 | ປານກາງ |
| | ລວມ | 3.19 | 0.43 | ຫຼາຍ |